ບົດຂ່າວ

# ກອງປະຊຸມວ່າດ້ວຍຫຼັກການດຳເນີນທຸລະກິດ ຢ່າງມີຄວາມຮັບຜິດຊອບໃນ ສປປ ລາວ ຄັ້ງທີ 4

24 ມີນາ 2023

## ຫຼັກການດຳເນີນທຸລະກິດແບບມີຄວາມຮັບຜິດຊອບ – ເຄື່ອງຈັກຂັບເຄື່ອນຂະບວນການຫຼຸດພົ້ນອອກຈາກສະຖານະພາບດ້ອຍພັດທະນາຢ່າງຫຼູ່ຮູ່ມໄຫຼ ແລະ ທົນທານຂອງ ສປປ ລາວ



ບັນດາກະຊວງ, ທຸລະກິດ, ສະຫະພາບກຳມະບານ, ພາກສັງຄົມ, ພາກວິຊາການ, ອົງການ ສປຊ, ແລະ ຄູ່ຮ່ວມພັດທະນາ ມາເຕົ້າໂຮມກັນໃນ ກອງປະຊຸມວ່າດ້ວຍຫຼັກການດຳເນີນທຸລະກິດແບບມີຄວາມຮັບຜິດຊອບຄັ້ງທີ 4 ໃນ ສປປ ລາວ.

**ຮູບພາບໂດຍ:** ລູ່ ແສນສຸພອນ, ອົງການ ສປຊ ເພື່ອການພັດທະນາ, ສປປ ລາວ

**ນະຄອນຫຼວງວຽງຈັນ, ວັນທີ 24 ມີນາ 2023** – ກະຊວງອຸດສະຫະກຳ ແລະ ການຄ້າ (ກອຄ), ສະຖານທູດການາດາ, ແລະ ອົງການ ສປຊ ເພື່ອການພັດທະນາ ໄດ້ຮ່ວມກັນຈັດ ກອງປະຊຸມວ່າດ້ວຍຫຼັກການດຳເນີນທຸລະກິດຢ່າງມີຄວາມຮັບຜິດຊອບຄັ້ງທີ 4 ເພື່ອປຶກສາຫາລືກ່ຽວກັບແນວໂນ້ມ, ຜົນປະໂຫຍດ, ແລະ ສິ່ງທ້າທາຍໃນການປະຕິບັດມາດຕະຖານສາກົນ ດ້ານການດຳເນີນທຸລະກິດແບບມີຄວາມຮັບຜິດຊອບໃນ ສປປ ລາວ.

ໃນຊ່ວງຊຸມປີທີ່ຜ່ານມາ, ສປປ ລາວ ໄດ້ກາຍມາເປັນໜຶ່ງໃນປະເທດ ທີ່ມີເສດຖະກິດຂະຫຍາຍໂຕໄວທີ່ສຸດ ໃນພາກພື້ນອາຊຽນ ແລະ ເປັນອັນດັບທີ 13 ໃນຂອບເຂດທົ່ວໂລກ, ໂດຍມີອັດຕາການຂະຫຍາຍໂຕສະເຫຼ່ຍທີ່ປະມານ 8 ສ່ວນຮ້ອຍ. ເມື່ອບັນລຸໄດ້ 3 ເງື່ອນໄຂດ້ານເສດຖະກິດ-ສັງຄົມຂອງ ອົງການ ສປຊ ແລ້ວ, ສປປ ລາວ ກໍ່ຖືວ່າຄົບເງື່ອນໄຂຢ່າງເປັນທາງການ ໃນການຫຼຸດພົ້ນອອກຈາກສະຖານະພາບດ້ອຍພັດທະນາໃນປີ 2021 ແລະ ຈະກາຍມາເປັນປະເທດກຳລັງພັດທະນາພາຍໃນປີ 2026.

ເຖິງແມ່ນວ່າການຂະຫຍາຍໂຕຂອງເສດຖະກິດໃນ ສປປ ລາວ ຈະຖືກຂັບເຄື່ອນໂດຍການເຄື່ອນໄຫວທຸລະກິດເປັນສ່ວນໃຫຍ່ ທັງຍັງຊ່ວຍປູທາງໄປສູ່ຂະບວນການຫຼຸດພົ້ນອອກຈາກສະຖານະພາບດ້ອຍພັດທະນາກໍ່ຕາມ, ແຕ່ກໍ່ຕ້ອງແລກມາດ້ວຍຊັບພະຍາກອນທຳມະຊາດ ແລະ ຄວາມກົດດັນທີ່ສູງຂຶ້ນ ໃນການຕ້ອງປະຕິບັດມາດຕະຖານແຮງງານໃຫ້ໄດ້. ການເພີ່ມສູງຂຶ້ນຂອງມົນລະພິດທາງນ້ຳ ແລະ ທາງອາກາດ, ຄວາມເສຍຫາຍດ້ານຊີວະນາໆພັນ, ການຍົກຍ້າຍຂອງຊຸມຊົນ, ສະພາບການເຮັດວຽກທີ່ບໍ່ປອດໄພ, ແລະ ການຈ່າຍຄ່າແຮງທີ່ບໍ່ເທົ່າທຽມ ໂດຍບັນດາທຸລະ

ກິດຍັງມີບໍ່ມີການດຳເນີນຢ່າງມີຄວາມຮັບຜິດຊອບ ໄດ້ສົ່ງຜົນກະທົບທັງທາງກົງ ແລະ ທາງອ້ອມຕໍ່ຊີວິດການເປັນຢູ່ຂອງປະຊາຊົນຈຳນວນຫຼາຍ.

ເພື່ອຮັບປະກັນໃຫ້ການເຄື່ອນໄຫວທຸລະກິດ ສືບຕໍ່ຂັບເຄື່ອນການພັດທະນາເສດຖະກິດຂອງ ສປປ ລາວ ແລະ ຂະບວນການຫຼຸດພົ້ນອອກຈາກສະຖານະພາບດ້ອຍພັດທະນາ ໂດຍບໍ່ສ້າງຄວາມເສຍຫາຍຕໍ່ສິ່ງແວດລ້ອມ ແລະ ຄວາມເປັນຢູ່ທີ່ດີຂອງປະຊາຊົນ, ສິ່ງສຳຄັນແມ່ນລັດຖະບານ ແລະ ພາກທຸລະກິດ ຈະຕ້ອງໄດ້ຮັບຮອງເອົາຫຼັກການດຳເນີນທຸລະກິດຢ່າງມີຄວາມຮັບຜິດຊອບ.

"ປັດໄຈສຳຄັນໃນການຫຼຸດພົ້ນອອກຈາກສະຖານະພາບດ້ອຍພັດທະນາ ແມ່ນຄວາມທົນທານຂອງປະເທດ ໃນການປະເຊີນໜ້າກັບຜົນກະທົບທາງເສດຖະກິດ ແລະ ການປັບໂຕຕໍ່ສະພາບການຂອງໂລກທີ່ປ່ຽນແປງຢູ່ຕະຫຼອດເວລາ. ເພື່ອຮັບປະກັນໃຫ້ ສປປ ລາວ ບໍ່ຖອຍຫຼັງກັບຄືນສູ່ສະຖານະພາບດ້ອຍພັດທະນາອີກ ພາຍຫຼັງທີ່ຫຼຸດພົ້ນອອກມາແລ້ວນັ້ນ, ຍຸດທະສາດແຫ່ງຊາດວ່າດ້ວຍການຫຼຸດພົ້ນອອກຈາກສະຖານະພາບດ້ອຍພັດທະນາ 2022 ຈຶ່ງໄດ້ໃຫ້ບຸລິມະສິດຕໍ່ການກະຈາຍຄວາມສ່ຽງດ້ານການສົ່ງອອກ ທັງໃນດ້ານສິນຄ້າ ແລະ ຕະຫຼາດ, ການດຶງດູດການລົງທຶນທີ່ມີຄຸນນະພາບສູງ, ແລະ ການຄຸ້ມຄອງຊັບພະຍາກອນທຳມະຊາດແບບຍືນຍົງ ໃນລະຫວ່າງ ແລະ ພາຍຫຼັງຫຼຸດພົ້ນອອກຈາກສະຖານະພາບດ້ອຍພັດທະນາແລ້ວ," ທ່ານ ແສງພະນົມຈອນ ອິນທະສານ ຮອງຫົວໜ້າກົມແຜນການ ແລະ ການຮ່ວມມື, ກອຄ, ໄດ້ເນັ້ນໃຫ້ເຫັນເຖິງຄວາມສຳຄັນ. "ເມື່ອຕະຫຼາດຂະໜາດໃຫຍ່ຫຼາຍແຫ່ງ ມີການຮັບຮອງເອົາກົດໝາຍກວດສອບທຸລະກິດພາກບັງຄັບ ຫຼາຍຂຶ້ນ ແລະ ນັກລົງທຶນຕ່າງປະເທດ ກໍ່ມີຄວາມສົນໃຈຫຼາຍຂຶ້ນ ໃນການດຳເນີນທຸລະກິດທີ່ສ້າງຄວາມເສຍຫາຍຕໍ່ສິ່ງແວດລ້ອມ ແລະ ສັງຄົມໜ້ອຍລົງ, ສິ່ງສຳຄັນແມ່ນລັດຖະບານ ແລະ ພາກເອກະຊົນ ຈະຕ້ອງໄດ້ຊຸກຍູ້ໃຫ້ມີການຈັດຕັ້ງປະຕິບັດ ວາລະການດຳເນີນທຸລະກິດຢ່າງມີຄວາມຮັບຜິດຊອບ ໂດຍໄວ."

ສຳລັບລັດຖະບານແລ້ວ, ຫຼັກການດຳເນີນທຸລະກິດແບບມີຄວາມຮັບຜິດຊອບ ໝາຍເຖິງການສ້າງ ແລະ ການບັງຄັບໃຊ້ກົດໝາຍ ແລະ ນະໂຍບາຍທີ່ເຂັ້ມແຂງ ເພື່ອຄຸ້ມຄອງການເຄື່ອນໄຫວທຸລະກິດ, ໃນຂະນະທີ່ສຳລັບພາກທຸລະກິດນັ້ນ, ຫຼັກການດັ່ງກ່າວ ປະກອບມີການປະເມີນຜົນກະທົບທີ່ຕົນສ້າງຂຶ້ນຕໍ່ສິ່ງແວດລ້ອມ ແລະ ສັງຄົມ, ການຈັດຕັ້ງປະຕິບັດມາດຕະການຕ່າງໆ ເພື່ອສະກັດກັ້ນຜົນກະທົບທາງລົບ, ແລະ ການສະໜອງວິທີແກ້ໄຂຜົນກະທົບທາງລົບທີ່ເກີດຂຶ້ນ.

"ຫຼັກການດຳເນີນທຸລະກິດແບບມີຄວາມຮັບຜິດຊອບ ແມ່ນວຽກງານທີ່ເປັນບຸລິມະສິດສຳລັບປະເທດການາດາ. ຍຸດທະສາດການດຳເນີນທຸລະກິດຢ່າງມີຄວາມຮັບຜິດຊອບ ອັນໃໝ່ຂອງພວກເຮົາ ຈະຊ່ວຍຊຸກຍູ້ໃຫ້ບໍລິສັດການາດາ, ທັງທີ່ຢູ່ພາຍໃນ ແລະ ຕ່າງປະເທດ, ດຳເນີນທຸລະກິດ ໄປພ້ອມໆກັບການເຄົາລົບສິດທິມະນຸດຂອງແຮງງານທີ່ຕົນວ່າຈ້າງ, ຜູ້ສະໜອງສິນຄ້າ, ຜູ້ບໍລິໂພກ, ແລະ ຊຸມຊົນຕ່າງໆ, ທັງຍັງປົກປັກຮັກສາສິ່ງແວດລ້ອມນຳອີກ," ທ່ານ ບ໋ອບ ປາແຄ້ນ, ອຸປະທູດ ແລະ ຫົວໜ້າຫ້ອງການ ສະຖານທູດການາດາປະຈຳລາວ, ກ່າວ. "ອີງຕາມຍຸດທະສາດດັ່ງກ່າວ, ການເຄື່ອນໄຫວທຸລະກິດຂອງບໍລິສັດການາດາຢູ່ຕ່າງປະເທດ, ລວມທັງໃນ ສປປ ລາວ, ຈະຕ້ອງບໍ່ພຽງແຕ່ຍຶດໝັ້ນຕໍ່ກົດໝາຍ ແລະ ລະບຽບການແຫ່ງຊາດເທົ່ານັ້ນ, ແຕ່ຈະຕ້ອງດັດປັບຫຼັກປະຕິບັດຕ່າງໆຂອງຕົນ ໃຫ້ສອດຄ່ອງກັບມາດຕະຖານສາກົນນຳອີກ, ເຊັ່ນ: ກົດໝາຍແຮງງານສາກົນ, ກົດໝາຍສິ່ງແວດລ້ອມສາກົນ, ແລະ ກົດໝາຍສິດທິມະນຸດສາກົນ."

ກອງປະຊຸມວ່າດ້ວຍຫຼັກການດຳເນີນທຸລະກິດຢ່າງມີຄວາມຮັບຜິດຊອບ ໄດ້ສະໜອງເວທີໃຫ້ແກ່ລັດຖະບານ ແລະ ຄູ່ຮ່ວມງານທີ່ບໍ່ສັງກັດລັດ ເພື່ອປຶກສາຫາລືມາດຕະຖານການດຳເນີນທຸລະກິດແບບມີຄວາມຮັບຜິດຊອບ ແລະ ຄົ້ນຄວ້າຫາແນວຄິດ ແລະ ແນວທາງຕ່າງໆ ໃນການຈັດຕັ້ງປະຕິບັດມາດຕະຖານເຫຼົ່ານັ້ນ ທັງໃນລະດັບນະໂຍບາຍ ແລະ ລະດັບປະຕິບັດການໃນ ສປປ ລາວ. ຫຼັກການຊີ້ນຳຂອງ ອົງການ ສປຊ ວ່າດ້ວຍທຸລະກິດ ແລະ ສິດທິມະນຸດ

ແມ່ນມາດຕະຖານ ແລະ ແຜນທິດທາງສາກົນດ້ານການດຳເນີນທຸລະກິດຢ່າງມີຄວາມຮັບຜິດຊອບຕົ້ນຕໍ ເພື່ອຂະບວນການຫຼຸດພົ້ນອອກຈາກສະຖານະພາບດ້ອຍພັດທະນາຂອງ ສປປ ລາວ ແລະ ເພື່ອສົ່ງເສີມຄວາມທົນທານຢ່າງຕໍ່ເນື່ອງ, ໂດຍໃນປັດຈຸບັນໄດ້ມີຫຼາຍປະເທດແລ້ວ ທີ່ຜັນຂະຫຍາຍຫຼັກການຊີ້ນຳດັ່ງກ່າວມາເປັນ ແຜນການດຳເນີນງານແຫ່ງຊາດ ຂອງພວກເຂົາເອງ.

"ແຜນການດຳເນີນງານແຫ່ງຊາດ ທີ່ກຳນົດບຸລິມະສິດອັນຊັດເຈນໃຫ້ແກ່ລັດຖະບານ ໃນການດັດປັບກົດໝາຍ, ນະໂຍບາຍ ແລະ ຫຼັກປະຕິບັດຕ່າງໆຂອງຕົນ ໃຫ້ສອດຄ່ອງກັບຫຼັກການຊີ້ນຳຂອງ ອົງການ ສປຊ ຖືເປັນເຄື່ອງມືທີ່ມີປະສິດທິພາບ ໃນການດຶງດູດການລົງທຶນ, ການເຂົ້າເຖິງຕະຫຼາດໃໝ່ທີ່ມີຄຸນນະພາບ ແລະ ເປັນການສ້າງລາຍໄດ້ດ້ວຍຊ່ອງທາງໃໝ່," ທ່ານນາງ ຣິຄາດາ ຣິເກີ, ຜູ້ຕາງໜ້າອົງການ ສປຊ ເພື່ອການພັດທະນາ, ກ່າວ. 'ອົງການ UNDP ໄດ້ໃຫ້ການສະໜັບສະໜູນການລິເລີ່ມ ແລະ ການສ້າງ ແຜນດຳເນີນງານແຫ່ງຊາດ ໃນທົ່ວທຸກພາກພື້ນ, ລວມທັງໃນ ບັງກະລາເທດ ແລະ ເນປານ, ທີ່ແນໃສ່ຫຼຸດພົ້ນອອກຈາກສະຖານະພາບດ້ອຍພັດທະນາໃນປີ 2026 ເຊັ່ນກັນ. ພວກເຮົາພ້ອມແລ້ວທີ່ຈະສະໜັບສະໜູນ ລັດຖະບານ ສປປ ລາວ ໃນຂະບວນການດັ່ງກ່າວ ເພື່ອຮັບປະກັນໃນການຫຼຸດພົ້ນຈາກສະຖານະພາບດັ່ງກ່າວ."

ກອງປະຊຸມວ່າດ້ວຍຫຼັກການດຳເນີນທຸລະກິດແບບມີຄວາມຮັບຜິດຊອບຄັ້ງທີ 4 ນີ້ ແມ່ນຖືກຈັດຂຶ້ນພາຍຫຼັງທີ່ປະເທດການາດາ ໄດ້ມີການຈັດກອງປະຊຸມປຶກສາຫາລືອື່ນໆ ທີ່ກ່ຽວຂ້ອງກັບຫຼັກການດັ່ງກ່າວ ແລະ ຖືກດຳເນີນການພາຍໃຕ້ຂອບວຽກຂອງໂຄງການທີ່ມີຊື່ວ່າ "ການປັບປຸງຄຸນນະພາບ, ຄວາມຮັບຜິດຊອບ, ຫຼັກການດຳເນີນງານ, ແລະ ຄວາມໂປ່ງໃສຂອງທຸລະກິດໃນ ສປປ ລາວ," ຫຼື ທີ່ຮູ້ຈັກໃນອີກຊື່ວ່າ IMPACT Biz, ທີ່ໄດ້ຮັບການຈັດຕັ້ງປະຕິບັດໂດຍ ກະຊວງອຸດສະຫະກຳ ແລະ ການຄ້າ ແລະ ອົງການ UNDP, ດ້ວຍການສະໜັບສະໜູນຈາກລັດຖະບານຍີ່ປຸ່ນ.

ກອງປະຊຸມຄັ້ງນີ້ປະກອບມີຜູ້ເຂົ້າຮ່ວມຫຼາຍກວ່າ 100 ທ່ານຈາກໜ່ວຍງານພາກລັດ, ພາກທຸລະກິດທັງພາຍໃນ ແລະ ຕ່າງປະເທດ, ອົງການກຳມະບານ, ອົງການຈັ້ງຕັ້ງທາງສັງຄົມ, ສະຖານບັນການສຶກສາ, ອົງການ ສປຊ, ແລະ ຄູ່ຮ່ວມພັດທະນາ.

---

**ສຳລັບຂໍ້ມູນເພີ່ມເຕີມ, ກະລຸນາຕິດຕໍ່:**

ທ່ານນາງ ອັກສອນທິບ ສົມວໍຣະຈິດ
ທີ່ປຶກສາດ້ານວຽກງານສື່ສານ, ອົງການ UNDP
aksonethip.somvorachit@undp.org

ທ່ານນາງ ສິນສະຫວັນ ສອນປະເສີດ
ພະນັກງານສື່ສານ ແລະ ພົວພັນລັດຖະບານ, ອົງການ UNDP
sinsavanh.sonepaseuth@undp.org

ທ່ານນາງ Maeve Milligan
ພະນັກງານຮັບຜິດຊອບວຽກງານການເມືອງ ແລະ ພາກລັດ
ຫ້ອງການສະຖານທູດການາດາ
maeve.milligan@international.gc.ca